ສາທາລະນະລັດປະຊາທິປະໄຕປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

---

ກະຊວງການເງິນ

ກົມພາສີ

ເລກທີ 0573/ກພສ

ນະຄອນຫລວງວຽງຈັນ, ລົງວັນທີ 22 DEC 2009

# ແຈ້ງການ

*ເຖິງ:* ບັນດາພະແນກອ້ອມຂ້າງກົມພາສີ, ພາສີປະຈຳເຂດ ແລະ ດ່ານພາສີຊາຍແດນ ໃນຂອບເຂດທົ່ວປະເທດ.

*ເລື່ອງ:* ການຍົກເວັ້ນພາສີຍ້ອນຫລັງ ນ້ຳມັນເຊື້ອໄຟ ທີ່ໄດ້ສະໜອງໃຫ້ແກ່ໂຄງການກໍ່ສ້າງ ໃນທົ່ວປະເທດ.

- ອີງຕາມກົດໝາຍພາສີ ສະບັບເລກທີ 05/ສພຊ ລົງວັນທີ 20.5.2005.
- ອີງຕາມແຈ້ງການກະຊວງການເງິນ ສະບັບເລກທີ 1566/ຫກ.ກງ ວັນທີ 8.07.09 ກ່ຽວກັບການຈັດຕັ້ງປະຕິບັດແລະຄຸ້ມຄອງນ້ຳມັນຍົກເວັ້ນ ທີ່ນຳເຂົ້າມາຮັບໃຊ້ໂຄງການຕ່າງໆໃນທົ່ວປະເທດ.

ຜ່ານມາກົມພາສີ ສັງເກດເຫັນວ່າ ມີຫລາຍໂຄງການ ໄດ້ສັ່ງຊື້ນ້ຳມັນທີ່ເສຍພາສີແລ້ວ ນຳບໍລິສັດເຊື້ອໄຟ ເພື່ອມາຮັບໃຊ້ການກໍ່ສ້າງຂອງໂຄງການ, ຫລັງຈາກໄດ້ຮັບແຜນນຳເຂົ້ານ້ຳມັນຍົກເວັ້ນຈາກຂະແໜງການກ່ຽວຂ້ອງແລ້ວ ຈຶ່ງນຳເຂົ້ານ້ຳມັນຍົກເວັ້ນພາສີ ມາທົດແທນຄືນ. ພາຍຫລັງມີລະບຽບການປະລິມສິນ້ຳມັນຍົກເວັ້ນ ເຮັດໃຫ້ການທົດແທນຄືນນ້ຳມັນຍົກເວັ້ນພົບບັນຫາ, ສະນັ້ນຈຶ່ງມີຫລາຍບໍລິສັດແລະໂຄງການກໍ່ສ້າງ ສະເໜີມາຍັງກົມພາສີ ຂໍອະນຸ ຍາດນຳເຂົ້ານ້ຳມັນຍົກເວັ້ນໂດຍບໍ່ປະລິມສິ ເພື່ອທົດແທນກັນຄືນ, ຊຶ່ງໄດ້ສ້າງຄວາມຫຍຸ້ງຍາກໃຫ້ແກ່ກົມພາສີ ໃນການພິຈາລະນາຄົ້ນຄວ້າ.

## ກົມພາສີ ອອກແຈ້ງການ, ຄື :

1. *ການອະນຸຍາດຍົກເວັ້ນພາສີ ຍ້ອນຫລັງຂອງນ້ຳມັນເຊື້ອໄຟ ເພື່ອມາທົດແທນຄືນ*, ແມ່ນການນຳເຂົ້ານ້ຳມັນຍົກເວັ້ນ ທີ່ບໍ່ຕ້ອງປະລິມສິ ຕາມແຈ້ງການກະຊວງການເງິນ ເລກທີ 1566/ຫກ.ກງ ຊຶ່ງປະກອບມີເງື່ອນໄຂ ດັ່ງລຸ່ມນີ້, ຄື :

   - ໂຄງການກໍ່ສ້າງ ແລະ ບໍລິສັດເຊື້ອໄຟ ຕ້ອງໄດ້ສະເໜີມາຍັງກົມພາສີ ເປັນລາຍລັກອັກສອນໂດຍລະບຸລະອຽດ ກ່ຽວກັບຈຳນວນນ້ຳມັນທີ່ຕ້ອງການນຳໃຊ້ ທີ່ມີເຫດຜົນພຽງພໍ, ພ້ອມທັງຄັດຕິດສັນຍາຊື້ຂາຍ ແລະ ເອກະສານອື່ນໆຂອງໂຄງການ, ເພື່ອເປັນບ່ອນອີງໃຫ້ກົມພາສີ ໃນການພິຈາລະນາ

- ນ້ຳມັນຈຳນວນດັ່ງກ່າວ ຕ້ອງໄດ້ເສຍພາສີ-ອາກອນນຳເຂົ້າ ແລະ ຄ່າທຳນຽມທາງ ຢ່າງຄົບຖ້ວນ ແລະ ປະລິມສີ ຕາມລະບຽບການ.

- ບໍລິສັດເຊື້ອໄຟ ຕ້ອງມີໃບບິນນຳສົ່ງນ້ຳມັນດັ່ງກ່າວ ຊຶ່ງປະກອບດ້ວຍຂໍ້ມູນ, ເຊັ່ນ : ເລກທີໃບບິນ, ວັນເດືອນປີ, ຜູ້ສັ່ງຊື້, ຊະນິດນ້ຳມັນ, ເລກທະບຽນລົດຂົນສົ່ງ, ຜູ້ຂັບລົດ, ສະຖານທີ່ມອບ-ຮັບ ແລະ ມີການເຊັນຢັ້ງຢືນຈາກເຈົ້າໜ້າທີ່ພາສີ ກ່ຽວກັບການປະລິມສີ, ວັນເວລາການເຄື່ອນຍ້າຍ ແລະ ອື່ນໆ ຕາມລະບຽບການພາສີ. ໃນກໍລະນີ ທີ່ໂຄງການຕັ້ງຢູ່ບ່ອນຫ່າງໄກ ບໍລິສັດຕ້ອງໄດ້ປະກອບ ໃບແຈ້ງພາສີ *ບ80* ຄຸ້ມຄອງການເຄື່ອນຍ້າຍ.

- ກົມພາສີ ຈະພິຈາລະນາຍົກເວັ້ນພາສີຍ້ອນຫລັງ ໃຫ້ສະເພາະແຕ່ນ້ຳມັນເຊື້ອໄຟ(ເສຍພາສີ-ອາກອນແລ້ວ) ທີ່ໄດ້ສະໜອງໃຫ້ໂຄງການ ພາຍໃນກຳນົດ *ບໍ່ເກີນ 30 ວັນ*, ນັບແຕ່ມື້ ທີ່ເຈົ້າໜ້າທີ່ພາສີ ເຊັນຢັ້ງຢືນລົງໃນໃບບິນນຳສົ່ງ ຫລື ບ80 ເທົ່ານັ້ນ. ຖ້າເກີນໄລຍະເວລາດັ່ງກ່າວ ຈະບໍ່ອະນຸຍາດຍົກເວັ້ນຍ້ອນຫລັງ ໃຫ້ໄດ້.

2. *ຂັ້ນຕອນປະຕິບັດການຍົກເວັ້ນພາສີ ເພື່ອທົດແທນຄືນ*, ບໍລິສັດເຊື້ອໄຟ ແລະ ໂຄງການ ຕ້ອງໄດ້ປະກອບເອກະສານ ຍື່ນຕໍ່ກົມພາສີ ເພື່ອພິຈາລະນາໃນການອະນຸມັດຍົກເວັ້ນຍ້ອນຫລັງ, ຄື :

- ໃບແຈ້ງພາສີ ບ85 ຕາມຈຳນວນທີ່ຈະທົດແທນຄືນ, ຕົວຢ່າງ : ບໍລິສັດ ໄດ້ສະໜອງນ້ຳມັນກາຊວນໃຫ້ໂຄງການຈຳນວນ 10.000 ລິດ, ກົມພາສີ ຈະພິຈາລະນາຍົກເວັ້ນທົດແທນຄືນ ຈຳນວນ 10.000 ລິດເທົ່າກັນ, ໂດຍຖືເອົາຕາມຈຳນວນເປັນຫລັກໃນການໄລ່ລຽງທົດແທນຄືນ.

- ໃບບິນນຳສົ່ງນ້ຳມັນ ທີ່ມີລາຍເຊັນຢັ້ງຢືນຂອງເຈົ້າໜ້າທີ່ພາສີ ແລະ ຜູ້ຮັບນ້ຳມັນທີ່ໂຄງການ, ຫລື ໃບແຈ້ງພາສີ ບ80.

- ໃບສະຫລຸບການຊື້ຂາຍນ້ຳມັນ ທີ່ມີການເຊັນຢັ້ງຢືນ ຈາກບໍລິສັດນ້ຳມັນເຊື້ອໄຟ (ຜູ້ສະໜອງ), ບໍລິສັດຜູ້ຮັບເໝົາກໍ່ສ້າງ ແລະ ເຈົ້າຂອງໂຄງການ.

- ອະນຸຍາດນຳເຂົ້າຍົກເວັ້ນ ຈາກຂະແໜງການກ່ຽວຂ້ອງ ທີ່ຍັງມີຜົນນຳໃຊ້, ເຊັ່ນ : ກະຊວງແຜນການແລະການລົງທຶນ, ກະຊວງອຸດສະຫະກຳ-ການຄ້າ, ແຈ້ງການຂອງລັດຖະບານ (ຖ້າເປັນກໍລະນີພິເສດ ).

3. *ຄວາມຮັບຜິດຊອບຂອງແຕ່ລະພາກສ່ວນ* ໃນການຄຸ້ມຄອງນ້ຳມັນຍົກເວັ້ນ ທົດແທນຄືນ, ມີຄື :

3.1. *ບໍລິສັດເຊື້ອໄຟ(ຜູ້ສະໜອງ) ແລະ ໂຄງການ* :

- ເປັນເຈົ້າການໃນການສ້າງແຜນຄວາມຕ້ອງການ ເພື່ອນຳສະເໜີກົມພາສີພິຈາລະນາ, ໃຫ້ຄວາມຮ່ວມມືກັບເຈົ້າໜ້າທີ່ພາສີ ໃນການສະໜອງຂໍ້ມູນ ແລະ ການກວດກາ.

- ພາຍຫລັງນ້ຳມັນຈຳນວນດັ່ງກ່າວ ສົ່ງຮອດໂຄງການແລ້ວ ຕ້ອງສຳເນົາໃບບິນນຳສົ່ງ ທີ່ມີການເຊັນຢັ້ງຢືນຈາກບໍລິສັດຮັບເໝົາກໍ່ສ້າງ ສົ່ງໃຫ້ເຈົ້າໜ້າທີ່ພາສີປະຈຳດ່ານ ແລະ ພະແນກຄຸ້ມຄອງການສົ່ງອອກນຳເຂົ້າ(ກົມພາສີ) ເພື່ອຕິດຕາມສັງລວມ.

- ສະຫລຸບການຊື້ຂາຍນ້ຳມັນ ໂດຍມີການເຊັນຢັ້ງຢືນລະຫ່ວາງບໍລິສັດເຊື້ອໄຟ(ຜູ້ສະໜອງ), ບໍລິສັດຜູ້ຮັບເໝົາກໍ່ສ້າງ ແລະ ເຈົ້າຂອງໂຄງການ.

– ເອົາໃຈໃສ່ປະກອບເອກະສານເພື່ອລົບລ້າງ ບ85 ນ້ຳມັນທີ່ນຳເຂົ້າມາທົດແທນກັນຄືນ. ບ85 ສະບັບດັ່ງກ່າວ ຕ້ອງໄດ້ລະບຸໃຫ້ແຈ້ງວ່າ ແມ່ນນ້ຳມັນເພື່ອນຳເຂົ້າມາຍົກເວັ້ນທົດແທນຄືນ ຂອງໂຄງການໃດນຶ່ງ.

– ພາຍຫລັງກົມພາສີ ໄດ້ອະນຸຍາດຍົກເວັ້ນພາສີແລ້ວ ຕ້ອງປະກອບໃບແຈ້ງພາສີເປັນລາຍລະອຽດ ເພື່ອສະສາງ ບ85 ຕາມລະບຽບການກຳນົດ.

3.2. *ພະແນກຄຸ້ມຄອງການສົ່ງອອກ-ນຳເຂົ້າ,* (ກົມພາສີ) :

– ຄົ້ນຄວ້າປະກອບຄຳເຫັນທາງວິຊາການ ຕໍ່ການສະເໜີຂອງບໍລິສັດ ແລະໂຄງການ ເພື່ອນຳສະເໜີຫົວໜ້າກົມພາສີ ພິຈາລະນາ.

– ຄຸ້ມຄອງໄລ່ລຽງແຜນການສະໜອງນ້ຳມັນ ຕາມຈຳນວນນ້ຳມັນ ທີ່ໄດ້ຈັດສົ່ງໃຫ້ໂຄງການ ແລະ ການອະນຸມັດຍົກເວັ້ນ ໃນແຕ່ລະຄັ້ງ.

– ຕິດຕາມ, ກວດກາ ບັນດາເອກະສານປະກອບ ໃນການຂໍຍົກເວັ້ນພາສີຍ້ອນຫລັງ ໃຫ້ສອດຄ່ອງກັບເງື່ອນໄຂ ທີ່ກຳນົດໄວ້ໃນແຈ້ງການສະບັບນີ້.

3.3. *ດ່ານພາສີ ບ່ອນນ້ຳມັນເຊື້ອໄຟ ນຳເຂົ້າ* :

– ເອົາໃຈໃສ່ຕິດຕາມກວດກາ ການຈັດສົ່ງນ້ຳມັນທີ່ເສຍພາສີແລ້ວ ຂອງບໍລິສັດ ໃຫ້ແກ່ໂຄງການຕ່າງ ຕາມການອະນຸຍາດຂອງກົມພາສີ. ໃນການເຊັນຢັ້ງຢືນ ຕ້ອງໄດ້ລະບຸແຈ້ງກ່ຽວກັບການປະລິມສີ, ຈຳນວນນ້ຳມັນ, ທະບຽນລົດຂົນສົ່ງ ແລະອື່ນໆທີ່ກ່ຽວຂ້ອງ, ພ້ອມນັ້ນ ກໍ່ຕ້ອງໄດ້ແຈ້ງຂໍ້ມູນການເຄື່ອນຍ້າຍ ໃຫ້ພະແນກຫລືໜ່ວຍງານຕ້ານແລະສະກັດກັ້ນ ຊາບ ເພື່ອຕິດຕາມກວດກາ.

– ເລັ່ງທວງການສະສາງ ບ85 ນ້ຳມັນທີ່ນຳເຂົ້າມາທົດແທນຄືນ ຕາມລະບຽບການ.

– ສະຫລຸບລາຍງານ ການຈັດສົ່ງນ້ຳມັນເສຍພາສີ ຂອງໂຄງການ, ບ85 ທີ່ຍັງຄ້າງຊຳລະ ຂອງບັນດາບໍລິສັດ ສົ່ງໃຫ້ກົມພາສີ (ພະແນກຄຸ້ມຄອງການສົ່ງອອກນຳເຂົ້າ) ເປັນແຕ່ລະອາທິດ.

3.4. *ພະແນກ ຫລື ໜ່ວຍງານຕ້ານແລະສະກັດກັ້ນ* :

– ຕິດຕາມ, ກວດກວດການເຄື່ອນຍ້າຍນ້ຳມັນຈຳນວນດັ່ງກ່າວ. ໃນກໍລະນີຫາກພົບເຫັນວ່ານຳສົ່ງບໍ່ຖືກຕ້ອງຕາມເປົ້າໝາຍທີ່ກົມພາສີອະນຸຍາດ ຕ້ອງໄດ້ດຳເນີນມາດຕະການ ຢ່າງເຂັ້ມງວດ ແລະ ລາຍງານໃຫ້ກົມພາສີຊາບໃນທັນທີ .

4. *ສະຖານທີ່ ໃນການປະລິມສີ* :

4.1. ພາສີປະຈຳເຂດ V : ໃຫ້ດຳເນີນການ ຢູ່ສາງນ້ຳມັນພິເສດ ທີ່ກົມພາສີ ໄດ້ອະນຸຍາດສ້າງຕັ້ງ, ຄື :

(1) *ສາງນ້ຳມັນພິເສດບໍລິສັດອິນຊີໄລຈີຊຕິກ* ທີ່ບ້ານຜາງແຫ້ງ ເມືອງນາຊາຍທອງ ໂດຍມອບໃຫ້ເຈົ້າໜ້າທີ່ພາສີປະຈຳປ້ອມດານຊີ ເປັນຜູ້ຕິດຕາມກວດກາ ແລະ ເຊັນຢັ້ງຢືນ.

(2) *ສາງນ້ຳມັນພິເສດບໍລິສັດຈັນສະຫວັນ* ທີ່ບ້ານດົງໂພສີ, ເມືອງນາຊາຍທອງ (ຕັ້ງຢູ່ຕໍ່ໜ້າທາງເຂົ້າດ່ານຂົວມິດຕະພາບ1) ໂດຍມອບໃຫ້ເຈົ້າໜ້າທີ່ດ່ານພາສີຂົວມິດຕະພາບ1 ເປັນຜູ້ຕິດຕາມກວດກາ ແລະ ເຊັນຢັ້ງຢືນ.

4.2. ພາສີປະຈຳເຂດ I,II,III,IV : ໃນໄລຍະລໍຖ້າການສ້າງຕັ້ງສາງນ້ຳມັນພິເສດ ໃຫ້ດຳເນີນການກວດກາ ຢູ່ທີ່ສາງນ້ຳມັນຂອງບໍລິສັດ ແລະ ປະຕິບັດຕາມລະບຽບກົດໝາຍພາສີ.

5. *ການອອກໃບແຈ້ງພາສີ ບ80 :*

- ໃນກໍລະນີ ທີ່ດ່ານພາສີ ບ່ອນນໍ້າມັນນໍາເຂົ້າ ແລະ ໂຄງການກໍ່ສ້າງ ຫາກຕັ້ງຢູ່ພາຍໃນເຂດດຽວກັນ, ຕົວຢ່າງ: ນໍາເຂົ້ານໍ້າມັນແລະເສຍພາສີ-ອາກອນ ທີ່ດ່ານຂົວມິດຕະພາບ1 ສົ່ງໃຫ້ໂຄງການກໍ່ສ້າງທີ່ແຂວງວຽງຈັນ, ແມ່ນໃຫ້ນໍາໃຊ້ໃບບິນນໍາສົ່ງ ຂອງບໍລິສັດເປັນເອກະສານຕິດຕາມ.
- ໃນກໍລະນີຫາກບໍ່ຢູ່ໃນເຂດດຽວກັນ, ຕົວຢ່າງ : ນໍາເຂົ້ານໍ້າມັນແລະເສຍພາສີ-ອາກອນ ທີ່ດ່ານຂົວມິດຕະພາບ1 ສົ່ງໃຫ້ໂຄງການກໍ່ສ້າງທີ່ແຂວງຫລວງພະບາງ, ບໍລິສັດເຊື້ອໄຟ(ຜູ້ສະໜອງ) ຕ້ອງໄດ້ປະກອບ ບ80 ຕິດຕາມການເຄື່ອນຍ້າຍ. ເມື່ອນໍ້າມັນໄປຮອດໂຄງການທີ່ແຂວງປາຍທາງ ຕ້ອງໄດ້ນໍາເອົາ ບ80 ໄປແຈ້ງຕໍ່ເຈົ້າໜ້າພາສີປະຈໍາເຂດດັ່ງກ່າວ ເພື່ອກວດກາຢັ້ງຢືນວ່ານໍ້າມັນໄດ້ໄປຮອດໂຄງການປາຍທາງແລ້ວ.

6. ມອບໃຫ້ບັນດາພະແນກການກົມພາສີ, ພາສີປະຈໍາເຂດ ແລະ ດ່ານພາສີຊາຍແດນ ຈົ່ງພ້ອມກັນເອົາໃຈໃສ່ຈັດຕັ້ງປະຕິບັດ ແລະ ໂຄສະນາເຜີຍແຜ່ລະບຽບແຈ້ງການສະບັບນີ້ ໃຫ້ບັນດາຜູ້ປະກອບການຊາບ ແລະ ເຂົ້າໃຈຢ່າງທົ່ວເຖິງ, ໃນການຈັດຕັ້ງປະຕິບັດຕົວຈິງ ຫາກພົບເຫັນຂໍ້ຫຍຸ້ງຍາກ ໃຫ້ລາຍງານກົມພາສີທັນທີ ເພື່ອມີວິທີການແກ້ໄຂ ຢ່າງທັນການ.
7. ແຈ້ງການສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ຫົວໜ້າກົມພາສີ,

ບຸນໂຈມ ອຸບົນປະເສີດ

ນໍາສົ່ງ :

- ສະມະຄົມນໍ້າມັນເຊື້ອໄຟແລະອາຍແກັດ 1 ສະບັບ"ເພື່ອຈັດຕັ້ງເຜີຍແຜ່"
- ບັນດາບໍລິສັດເຊື້ອໄຟ 1 ສະບັບ "ເພື່ອຊາບແລະປະຕິບັດ"
- ສາງນໍ້າມັນພິເສດ 1 ສະບັບ"ເພື່ອຊາບແລະປະຕິບັດ"
- ເກັບມ້ຽນສໍາເນົາ 1 ສະບັບ